ເລື່ອງສັ້ນ ເລື່ອງຈິງຄົນແທ້ ແລະບົດຄວາມ

ໂດຍນັກຂຽນໜຸ່ມນ້ອຍ

# ຊີວິດ ແລະ ຄວາມຝັນ



# ຊີວິດ ແລະຄວາມຝັນ

ແລະເລື່ອງອື່ນໆ

# ຊີວິດ ແລະ ຄວາມຝັນ
## ແລະເລື່ອງອື່ນໆ

ຂຽນໂດຍນັກຂຽນໜຸ່ມນ້ອຍ:

ຈຳປາ ດອນໂຂງ, ພູຜາຈຳປາລາວ, ດອກຝ້າຍເມືອງເໜືອ,
ໃສຫຼ້າຄຳ ຂະຫຍອງເອກ, ໃບພອນ ອິນທະລາດ, ເຂົ້າຕົ້ມຜັດ
ສຸກພັນສາ ພູຜາສຸກ, ອະລຸນກອນ ສີມມະລາດ, ສຸກດາລອນ ພົມມະເທບ,
ທິພະມົນ ສາຍວາລີ

ຈັດໜ້າອອກແບບປົກ:

ບໍລິສັດ ດອກເກດການພິມ ຈຳກັດຜູ້ດຽວ.

ບັນນາທິການ:

ດວງເດືອນ ບຸນຍາວົງ, ດາລາ ກັບລະຍາ

ຮູບປະກອບ:

ດວງແຂ ບຸນຍາວົງ

ຈັດພິມໂດຍ:

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ໂທ: (856-21) 213449

ອຸປະຖຳໂດຍ:

NIWANO PEACE FOUNDATION

ຈຳນວນພິມ 6000 ຫົວ

© ສະຫງວນລິຂະສິດ ໂດຍ ສະມາຄົມຮ່ວມນ້ຳໃຈ ກັບເດັກນ້ອຍລາວ

ພິມຄັ້ງທີ 1, ກັນຍາ 2007

ທະບຽນພິມເລກທີ: 144 ພຈ 27092007

ພິມທີ່ ພະໄຊ ກຣາບຟິກ

V ຄຳນຳ ໃນການຈັດພິມ

11 ຊີວິດ ແລະຄວາມຝັນ

ຣາງວັນ ທີ 2 - ຈຳປາ ດອນໂຂງ

23 ເມື່ອແມ່ບໍ່ກັບມາ

ຣາງວັນ ທີ 3 - ພູຜາ ຈຳປາລາວ

27 ອີ່ປຶກບ້ານນາ

ຣາງວັນຊົມເຊີຍ - ຄຳມີ ໄຊຍະວົງ

37 ເສດສົງຄາມ

ຣາງວັນຊົມເຊີຍພິເສດ - ໃສຫລ້າຄຳ ອະທຍອງເອກ

43 ຄູ່ຮັກຄູ່ພັດທະນາ

ຣາງວັນຊົມເຊີຍພິເສດ - ໃບພອນ ອິນທະລາດ

73 ໝາຂອງຂ້ອຍ

ຣາງວັນຊົມເຊີຍພິເສດ - ສາມະເນນ ແສງເພັດ ແສງໄພວັນ

77 ຄວາມປະທັບໃຈ ເທິງຄວາມລະອາຍໃຈ

ບົດເລົ່າເລື່ອງ ຣາງວັນທີ 1 - ສຸກພັນສາ ພູຜາສຸກ

**85** ທ້ອງຮ້ອງ ຕ້ອງບໍ່ລົງ

ຣາງວັນທີ 2 - ພູຜາ ຈຳປາລາວ

**91** ອ້າຍນ້ອຍ

ຣາງວັນທີ 3 - ອະລຸນກອນ ສີມມະລາດ

**100** ເຫັນບໍ່

- ສຸກດາລອນ ພົມມະເທບ

**105** ໂຮງຮຽນຂອງນ້ອງຢູ່ໄກ

ຣາງວັນທີ 3 - ທິບພະມີນ ສາຍວາລີ

---

**111** ປະຫວັດນັກຂຽນ

# ຄຳນຳ

ມີປຶ້ມອ່ານອອກມາຕື່ມຫົວໜຶ່ງ ມັກບໍ່ມັກ ກໍເປັນການຕື່ມສີສັນໃຫ້ແກ່ວົງການ ການປະພັນລາວຂອງພວກເຮົາພໍສົມຄວນ. ປຶ້ມຫົວນີ້ ໃສ່ຊື່ຕາມບົດເລື່ອງທີ່ໄດ້ຮັບຮາງວັນ ທີ 2 ນັບເປັນເຫຼັ້ມທີສອງຖັດຈາກປຶ້ມຊຸດ ວັນທີ 1 ຕຸລາ ທີ່ຈັດພິມໄປແລ້ວ ທັງສອງເປັນຜົນງານການກວດສອບທີ່ຈັດໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແຫ່ງປະເທດຍີ່ປຸ່ນ ສົກປີ 2006-07 ເຊິ່ງມີບົດສົ່ງເຂົ້າຮ່ວມເຖິງ 228 ບົດ ຈາກ 11 ແຂວງ. ໃນນັ້ນມີທັງ ເລື່ອງສັ້ນ ສາລະຄະດີ ແລະປະສົບການຊີວິດ ເລື່ອງຈິງຄົນແທ້ ທັງໝົດຂຽນໂດຍມືໃໝ່ ປາຍປາກກາ ຂອງຄົນໜຸ່ມ ອາຍຸຕ່ຳກວ່າ 25 ປີລົງມາ. ສະເພາະເຫຼັ້ມນີ້ ໄດ້ຈັດເອົາເລື່ອງສັ້ນ ກັບເລື່ອງປະສົບການຊີວິດທີ່ໄດ້ຮັບຮາງວັນທີ 1 ພ້ອມດ້ວຍເລື່ອງອື່ນໆຮອງລົງມາໂຮມທັງໝົດ 12 ເລື່ອງ.

ບົດເລື່ອງທີ່ສົ່ງເຂົ້າກວດສອບ ມີຫຼາກຫຼາຍສາລະ ບາງກໍສະທ້ອນບັນຫາສັງຄົມທີ່ກຳລັງຄຸກຄາມຄົນໄວໜຸ່ມ ເຊັ່ນການຕິດຫຼິ້ນຕິດທ່ຽວ ຕິດຢາ ການຫຼອກລວງ ການທໍລະຍົດ ຄວາມແຕກແຍກໃນສັງຄົມ ຄອບຄົວ ໄປຈົນຮອດບັນຫາລະດັບຊາດ ແລະພາກພື້ນ ເຊັ່ນ ການລັກຄ້າຂາຍມະນຸດ ບັນຫາສິ່ງແວດລ້ອມ ແລະ

ເລື່ອງທຳມະດາໆ ທີ່ເກີດກັບທຸກຄົນ ບໍ່ວ່າໄວໃດ ຄື ຄວາມຜິດຫວັງ ຄວາມຮັກ ຄວາມບໍ່ເຂົ້າໃຈ... ທັງໝົດນີ້ ເປັນຫົວຂໍ້ທີ່ພົບເຫັນໃນບົດເລື່ອງຂອງພວກນ້ອງໆຫຼາຍໆສິ່ງມາ ມັນສະທ້ອນອອກວ່າ ມີຄວາມຫ່ວງໃຍກັງວົນ ແລະຄວາມພະຍາຍາມຢາກຈະມີສ່ວນຮ່ວມແກ້ບັນຫາຂອງສັງຄົມ ບາງເລື່ອງ ມີເນື້ອໃນສຳນວນໂວຫານ ທີ່ເກືອບບໍ່ຢາກເຊື່ອວ່າ ແມ່ນເກີດຈາກປາຍປາກກາຂອງຜູ້ຂຽນໃນໄວບໍ່ເຖິງ ສາມສິບຢ່າງນີ້.

ໃນການກວດອ່ານເພື່ອຕັດສິນນັ້ນ ຈຳເປັນຕ້ອງໄດ້ວິເຄາະພິຈາລະນາກັນຢ່າງຖີ່ຖ້ວນ ໂດຍສະເພາະເລື່ອງສັ້ນ ເພາະພົບວ່າຫຼາຍເລື່ອງມີເຄົ້າໂຄງດັດແປງ ຫຼືຄັດກ່າຍມາຈາກທັງເລື່ອງເກົ່າເລື່ອງໃໝ່ (ພິມອອກ ແລ້ວ) ບາງກໍເປັນເລື່ອງຄ້າຍໆຄືໆຂອງຕ່າງປະເທດທີ່ຜ່ານເຂົ້າມາທາງສື່ໂທລະພາບ ດີວີດີ ວີດີໂອ ຕ່າງໆ ທັງໝົດນີ້ພາໃຫ້ຄະນະກຳມະການກວດສອບພວກເຮົາຮູ້ສຶກຫຍຸ້ງຍາກໜັກໃຈພໍສົມຄວນ ທັງກໍມີ ຄວາມເປັນຫ່ວງຢ້ານວ່າ ການປະພຶດເຊັ່ນນີ້ ຈະກາຍເປັນນິໄສຕິດໂຕ ເຊິ່ງມັນຈະບໍ່ພາພວກເຮົາໄປຮອດໃສເລີຍ ເພາະເຖິງວ່າ ໃນວັນນີ້ ຄະນະກຳມະການອາດຮູ້ບໍ່ທັນທົ່ວເຖິງ (ຕັດສິນໃຫ້ຮາງວັນໄປແລ້ວ) ແຕ່ເຮົາເອງຮູ້ດີ ແລະອັນສຳຄັນໃນອະນາຄົດ ວັນເວລາ ກັບຜູ້ອ່ານ ຍັງຈະຕັດສິນຜົນງານຂອງເຮົາອີກ.

ສະເພາະເຫຼັ້ມນີ້ ແມ່ນໂຮມເລື່ອງສັ້ນ ແລະບົດຂຽນເຄິ່ງ

ປະສົບການສ່ວນຕົວກັບເລື່ອງຈິງຄົນແທ້ ເຊິ່ງຂຽນກັບອອກມາ ຢ່າງຈິງຈັງ ຈິງໃຈ ບໍລິສຸດ ສະທ້ອນຄວາມມຸ່ງຫວັງໃນຊີວິດ ທີ່ບໍ່ພິລຶກ ພິລໍ້າ ເກີນໄປ (ຊີວິດ ແລະຄວາມຝັນ: ສາວຊົນນະບົດ ຢາກເປັນຄູ) ຄວາມ ເປັນຈິງທີ່ແສນວິປະໂຍກ ທີ່ເກີດຂຶ້ນກັບປະຊາຊົນຕາດໍາໆ (ເສດສົງຄາມ) ຫຼື ອະນາຄົດທີ່ກໍາລັງເປັ່ງແສງຮອງໆ (ຄູ່ຮັກ ຄູ່ພັດທະນາ) ຫຼື ປະສົບການເລັກໆນ້ອຍໆສ່ວນຕົວ ແຝງຂໍ້ຄຶດ (ຄວາມປະທັບໃຈ ເທິງຄວາມລະອາຍໃຈ) ເຊິ່ງເບິ່ງຄືກັບວ່າ ເປັນເລື່ອງຂີ້ໄງ່ຂີ້ຜົງ ແຕ່ກໍກະຕຸກເສັ້ນ ຕັ້ງຄໍາຖາມໄດ້.

ຈຸດສໍາຄັນອີກອັນໜຶ່ງ ທີ່ຄວນເວົ້າເຖິງອີກ (ດັ່ງເວົ້າໄວ້ ແດ່ແລ້ວ ໃນປຶ້ມເຫຼັ້ມກ່ອນ) ກໍແມ່ນການໃຊ້ ພາສາສໍານວນ ການສະກົດຄໍາ ເຊິ່ງເຖິງວ່າຈະເປັນພຽງຄຸນນະພາບດ້ານນອກ ແຕ່ມັນກໍສໍ່ສະແດງເຖິງຄວາມຮູ້ ລະດັບການສ້າງສັນເລືອກເຟັ້ນ ໄດ້ດີສົມຄວນ. ເນື່ອງຈາກວ່າຜູ້ຂຽນມີທັງຜູ້ໜຸ່ມນ້ອຍ ເປັນນັກຮຽນ ມັດທະຍົມປາຍ ມະຫາວິທະຍາໄລ ແລະພະນັກງານວິຊາການ ສໍານວນລີລາການຂຽນ ແລະການໃຊ້ສັບ ຈຶ່ງແຕກໂຕນກັນຫຼາຍ ບົດຂຽນຈໍານວນໜ້ອຍໜຶ່ງ ເກືອບບໍ່ຈໍາເປັນຕ້ອງກວດແກ້ເລີຍ ແຕ່ ສ່ວນຫຼວງຫຼາຍ ຈໍາເປັນຕ້ອງດັດແປງຕັດຮອນເອົາ ເພາະຍາວ ແລະຊໍ້າຄວາມເກີນໄປ ສ່ວນບົດປະເພດສາລະຄະດີ ທີ່ເວົ້າເຖິງ ສິ່ງແວດລ້ອມ ວັດທະນະທໍາ ຫຼືການພັດທະນາສັງຄົມ ມັກຈະມີສ່ວນ ຄ້າຍຄືກັບເອກະສານການເມືອງຂອງທາງລັດຖະການ ແຕ່ໜ້າ

ເສຽດາຍ ທີ່ຜູ້ຂຽນບໍ່ມັກອ້າງເຖິງ ເຊິ່ງການກະທຳດັ່ງກ່າວ ໃນດ້ານວິຊາການຖືວ່າ ເປັນການລະເມີດລິຂະສິດແບບໜຶ່ງ ເລື່ອງນີ້ ພວກເຮົາຄົງຈະຕ້ອງຮຽນຮູ້ນຳກັນຕື່ມອີກ ຈຶ່ງຂໍຝາກເປັນຂໍ້ຄິດໄວ້ກ່ອນ.

ຄວາມຈິງ ການຂຽນປະສົບການເລົ່າເລື່ອງສ່ວນຕົວ ເປັນບົດທີ່ຂຽນໄດ້ງ່າຍດາຍກວ່າ ສາລະຄະດີ ເຊິ່ງຕ້ອງຫາຂໍ້ມູນມາອ້າງອີງຄົ້ນຄວ້າ ແລະມີທັດສະນະຫຼັກໝັ້ນພໍສົມຄວນ. ການກວດສອບເທື່ອນີ້ ໃຫ້ບົດຮຽນສຳຄັນແກ່ພວກເຮົາເປັນອັນມາກ ມັນເປັນການທົດສອບຄວາມສາມາດໃນດ້ານເຕັກນິກການນຳສະເໜີ ການຮູ້ເລືອກຫົວຂໍ້ທີ່ພໍເໝາະພໍດີ ກັບລະດັບຄວາມຮູ້ ກັບແຫຼ່ງຂໍ້ມູນທີ່ສາມາດເຂົ້າເຖິງ ແລະອັນສຳຄັນທີ່ສຸດ ແມ່ນສານ (ສາລະ) ທີ່ສື່ອອກໄປນັ້ນວ່າ ສອດຄ່ອງກັບເປົ້າໝາຍ(ຜູ້ອ່ານ)ຫຼືບໍ່ ໝາຍຄວາມວ່າ ຜູ້ຂຽນຮູ້ກຳນົດບົດບາດຂອງຕົນ ແລະຮູ້ວ່າຈະຂຽນໃຫ້ໃຜອ່ານ.

ເນື່ອງຈາກເປັນບົດຂຽນ ກ່ຽວກັບປະສົບການເລື່ອງຈິງຄົນແທ້ ຊື່ຂອງບາງບົດບາງເລື່ອງຈຶ່ງແຂງກະດ້າງ ຟັງບໍ່ມ່ວນຫູບາງກໍຄ້າຍເປັນບົດສຳຫຼວດວິຊາການ ຫຼື ການເມືອງໄປ ທາງຄະນະບັນນາທິການ ໄດ້ຖືສິດປ່ຽນຊື່ໃຫ້ມີລັກສະນະວັນນະຄະດີແດ່ ເຊັ່ນ "ກຳພອຍ" ເປັນ "ອ້າຍນ້ອຍ", "ຕາບອດ" ເປັນ "ເຫັນບໍ່" ທັງນີ້ ໂດຍຮັກສາເນື້ອເລື່ອງ ກັບຊື່ຜູ້ຂຽນໄວ້ຕາມເດີມ ດັ່ງນັ້ນ ຖ້າບໍ່ພົບ ເຫັນຊື່ເດີມຂອງບົດເລື່ອງ ກໍຢ່າໄດ້ປະຫຼາດໃຈເລີຍ.

ສະຫຼຸບແລ້ວ ການຈັດກວດສອບຄັ້ງນີ້ ໃຫ້ໝາກຜົນ ແລະ

ບົດຮຽນຫຼາຍອັນ ທັງສຳລັບຄະນະຈັດຕັ້ງ ແລະຜູ້ສິ່ງເລື່ອງເຂົ້າກວດສອບ ເປັນການສ້າງສະໜາມເຝິກຝົນໃຫ້ແກ່ ຜູ້ກຳປາກກາທີ່ມີອຸດົມການ ແລະຈຸດໝາຍສູງສົ່ງແຫ່ງຊີວິດ. ທັງໝົດນີ້ ໄດ້ດຳເນີນໄປ ໂດຍສອດຄ່ອງກັບທິດທາງ ແລະໜ້າທີ່ຕົ້ນຕໍ ທີ່ພັກໄດ້ວາງອອກສຳລັບ 2006-2010 ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ທີ່ແນໃສ່ສົ່ງເສີມການອ່ານ ການປະດິດຄິດແຕ່ງ... (ເອກະສານ ກອງປະຊຸມໃຫຍ່ ຄັ້ງທີ 8 ພັກປະຊາຊົນ ປະຕິວັດລາວ 2006, ຫນ້າ 58). ບັດນີ້ ບົດຂຽນປະສົບການຊີວິດສົດໆຮ້ອນໆຂອງລູກຫຼານ ທີ່ຜ່ານການກວດສອບ ເລືອກເຟັ້ນ ແລະບັນນາທິການແລ້ວ ໄດ້ປາກົດຕໍ່ສາຍຕາຂອງທ່ານ ມັນເກີດຂຶ້ນໄດ້ ຍ້ອນຄວາມມຸ່ງມາດປາຖະໜາ ຂອງທຸກໆຄົນທີ່ມີສ່ວນຮ່ວມໃນວຽກງານນີ້ ແຕ່ພາລະກິດການສ້າງນັກຂຽນ ບໍ່ອາດສຳເລັດໄດ້ ດ້ວຍການກວດສອບ ຫຼື ດ້ວຍການຕີລາຄາໂດຍກຸ່ມບຸກຄົນຈຳນວນໜ້ອຍດຽວ ແຕ່ມັນແມ່ນຜູ້ອ່ານທັງຫຼາຍພຸ້ນ ຈະເປັນຜູ້ຕັດສິນ ໃຫ້ກຳເນີດແກ່ນັກຂຽນ.

*ທີ່ວຽງຈັນ ເດືອນ ກັນຍາ 2007*

*ດວງເດືອນ ບຸນຍາວົງ*

*ຕາງໜ້າຄະນະກຳມະການກວດສອບ*

# ລາຍຊື່ຄະນະກຳມະການຕັດສິນຮາງວັນ
# ປະຈຳປີ 2006-2007
# ການກວດສອບບົດຂຽນສັ້ນຂອງນັກຂຽນໜຸ່ມນ້ອຍ

1. ທ່ານ ດາລາ ກັນລະຍາ ຜູ້ຕາງໜ້າສະມາຄົມ, ເປັນປະທານ
2. ທ່ານ ກົງເດືອນ ເນດຕະວົງ ອຳນວຍການຫໍສະໝຸດແຫ່ງຊາດ, ເປັນກຳມະການ
3. ທ່ານ ກະວິນ ກຽງຄຳຊົນນີ ຮອງຫົວໜ້າກົມພິມຈຳໜ່າຍ, ເປັນກຳມະການ
4. ທ່ານ ດວງເດືອນ ບຸນຍາວົງ ນັກຂຽນ ຮາງວັນຊີໄຣ 2006, ເປັນກຳມະການ
5. ທ່ານ ໂອທອງ ຄຳອິນຊູ ອຳນວຍການ ວາລະສານ ວັນນະສິນ, ກຳມະການ.
6. ທ່ານ ສຸລະພີ ວີຣະວົງ, ສະມາຄົມ ALC ເປັນເລຂານຸການ.

# ຊີວິດ ແລະ ຄວາມຝັນ

ໂດຍ ຈຳປາ ດອນໄຊ

ຊີວິດຂອງຄົນເຮົາມີຄຸນຄ່າມະຫາສານ. ຊີວິດໃຜແມ່ນຜູ້ນັ້ນເປັນເຈົ້າຂອງ ທຸກຄົນສາມາດສ້າງຄວາມຝັນ ສານຝັນໃຫ້ກາຍເປັນຈິງໄປຕາມເສັ້ນທາງທີ່ມີຄວາມສົດໃສ ມີຄວາມສີວິໄລ, ມີວິຖີຊີວິດທີ່ດີ. ແຕ່ດ້ວຍເຫດຜົນໃດ ຄົນຈຳນວນຫຼາຍຈຶ່ງບໍ່ສາມາດເດີນໄປຕາມຄວາມຝັນຂອງຕົນເອງ. ສິ່ງເຫຼົ່ານີ້ ເກີດຂຶ້ນກັບຄົນທົ່ວໄປໂດຍບໍ່ເລືອກຊັ້ນ, ວັນນະ ຖານະ ຄົນຮັ່ງມີ ຫຼື ທຸກຍາກ ແລະຂ້ອຍກໍຕອບບໍ່ໄດ້ຄືກັນ.

ຊີວິດເຮົາຈະເອົາຫຍັງເປັນທີ່ແນ່ນອນບໍ່ໄດ້ດອກ ວັນນີ້ເຮົາອາດມີຄວາມສຸກ ແຕ່ວັນຂ້າງໜ້າ ບໍ່ມີໃຜຫຼຽວເຫັນ ອະນາຄົດເປັນສິ່ງບໍ່ແນ່ນອນ. ສິ່ງແນ່ນອນທີ່ສຸດຄືປັດຈຸບັນ ທີ່ເຮົາສາມາດຮັບຮູ້ໄດ້ ແລະພະຍາຍາມສ້າງປັດຈຸບັນໃຫ້ດີທີ່ສຸດ. ທຸກຄົນຕ້ອງການຄວາມກ້າວໜ້າ ຢາກໃຫ້ອະນາຄົດກ້າວໄກ, ສົດໃສ ມີຈຸດໝາຍປາຍທາງເຕັມໄປດ້ວຍແສງ

ສະຫວ່າງ. ສຳລັບຂ້ອຍແລ້ວ ຄວາມຄິດເຫຼົ່ານີ້ ໄດ້ຝັງເລິກເຂົ້າໃນຫົວໃຈຂ້ອຍ ເລີ່ມແຕ່ຮູ້ຈັກຄວາມຈົນຮອດ ປັດຈຸບັນ ອາດມີວັນໜຶ່ງຂ້າງໜ້າ ຄວາມຝັນຈະກາຍເປັນຄວາມຈິງ.

ອາຍຸຫົກປີ ຂ້ອຍເລີ່ມເຂົ້າໂຮງຮຽນປະຖົມບ້ານຊຽງຫວາງ ຫ້ອງ ປໍ 1 ໃນຫ້ອງຮຽນ ຜູ້ນ້ອຍກວ່າໝູ່ທັງອາຍຸແລະຕົນໂຕ ມີສາມຄົນ ນັບທັງຂ້ອຍ. ຂ້ອຍເປັນຄົນບ້ານອື່ນມາຮຽນ ສະນັ້ນ ໝູ່ໃນຫ້ອງ ຈຶ່ງມັກຢອກ ແລະເຮັດໃຫ້ຂ້ອຍໄຫ້ເລື້ອຍໆ. ເຂົ້າໂຮງຮຽນທຳອິດ ຂ້ອຍເປັນນັກຮຽນຝາກ ເພາະອາຍຸບໍ່ເຖິງເຈັດປີ, ຄູບອກວ່າ: ອາຍຸເຈັດປີ ແລະມືເຖິງຫູ ຈຶ່ງໄດ້ເຂົ້າຮຽນ ຂ້ອຍພະຍາຍາມດຶງມືນ້ອຍໆ ໃສ່ຫູໃຫ້ເຖິງກັນເພື່ອຈະໄດ້ເຂົ້າຮຽນ ແຕ່ແລ້ວ ມືຂອງຂ້ອຍກໍບໍ່ເຖິງຫູ ຈະພະຍາຍາມ ແນວໃດກໍຍັງບໍ່ຈຳຫູໄດ້ ເພາະຂ້ອຍນ້ອຍຫຼາຍ ຈົນໝູ່ເວົ້າຢອກວ່າ "ລູກຫຼອດ ຫຼື ໄກ່ໂຈ້ນກົ້ນກັກ ນຳບໍ່ຕັກ ລັກກິນຂອງຈີວ" ຍ້ອນຄວາມບໍ່ຮູ້ດຽງສາ ຂ້ອຍຢາກຮຽນຫຼາຍ ຍ້ານຄູບໍ່ຮັບເຂົ້າຮຽນ ຂ້ອຍໄດ້ແຕ່ນັ່ງໄຫ້ ສຸດທ້າຍຄູກໍຮັບເຂົ້າເປັນນັກຮຽນຝາກ. ເມື່ອເຂົ້າໂຮງຮຽນປົກກະຕິ ຂ້ອຍແລະໝູ່ອີກສອງຄົນ ທີ່ນ້ອຍກວ່າໝູ່ ຜັດປ່ຽນກັນໄດ້ທີ ໜຶ່ງ ສອງ ສາມ ຍ້ອນແນວນີ້ ໃນສົກຮຽນຕໍ່ມາຄູຈຶ່ງອະນຸຍາດໃຫ້ຂ້ອຍຂຶ້ນຫ້ອງປໍ 2.

ການຮ່ຳຮຽນດຳເນີນໄປ ຂ້ອຍບໍ່ເຄີຍຄ້າງຫ້ອງຈັກເທື່ອ ຂ້ອຍເລີ່ມມີຄວາມຝັນແຕ່ເຂົ້າຮຽນ ທຳອິດ ສິ່ງທີ່ມັກທີ່ສຸດຄື: ຢາກເປັນຄູສອນສິລະປະ (ຟ້ອນ) ຢູ່ໂຮງຮຽນສ້າງຄູ, ຢາກໄປຮຽນຕ່າງປະເທດ, ຢາກມີຄວາມຮູ້ສູງໆ ແລະຢາກມີຮ້ານຂາຍເຄື່ອງເປັນຂອງຕົນເອງ

ຂ້ອຍຄິດຝັນມາຕະຫຼອດ ເວລາຜ່ານໄປ ສົກຮຽນ 1999-2000 ຂ້ອຍຮຽນຈົບມໍ 6 ເສັງໄດ້ຢ່າງສົມບູນ ແລະໄດ້ທຶນໄປຮຽນຄູອະນຸບານ ຢູ່ໂຮງຮຽນສ້າງຄູດົງຄຳຊ້າງ ເມືອງຫາດຊາຍຟອງ ກຳແພງນະຄອນວຽງຈັນ ລະບົບ 1 ປີ ຂ້ອຍຕັດສິນໃຈໄປຮຽນ ແຕ່ຂ້ອຍບໍ່ຮູ້ວ່າ ແມ່ນຍ້ອນຄວາມດີໃຈ ຫຼື ຄວາມມັກຂອງຂ້ອຍບໍ ທີ່ຕັດສິນໃຈແບບນີ້. ສິ່ງທີ່ຮູ້ ຄື ບໍ່ມີບ່ອນໄປຮຽນ, ບໍ່ມີທຶນຫຼາຍ ແລະອີກຫຼາຍໆເຫດຜົນ.

ແມ່ບອກຂ້ອຍວ່າ:

"ໄປຮຽນສາລູກເອີຍ ເພື່ອອະນາຄົດ ບໍ່ມີອັນໃດດີກວ່າການຮ່ຳຮຽນດອກ, ຖ້າລູກມີຄວາມຮູ້ ກໍສາມາດພັດທະນາໂຕເອງໄດ້"

ເອື້ອຍຜູ້ຢູ່ຂ້າງເຮືອນເວົ້າວ່າ:

"ຕັດສິນໃຈໄປກໍດີແລ້ວ ໂຕເປັນຄົນມັກຟ້ອນ, ຟ້ອນງາມແລະເກັ່ງອີກ"

ຫຼາຍໆຫາງສຽງເວົ້າ ເຮັດໃຫ້ຂ້ອຍຕ້ອງຄຶ້ນຄິດແລະພິຈາລະນາ.

"ໂຕຮຽນເກັ່ງປານນີ້ ຄືໄປຮຽນຄູອະນຸບານ, ຊອກຮຽນແນວອື່ນບໍ່ໄດ້ບໍ?"

"ໄປຮຽນຄູ ເງິນເດືອນໜ້ອຍ ໂຕຍັງຕັດສິນໃຈໄປຮຽນບໍ !" ຂ້ອຍນັ່ງຄິດຫຼາຍມື້ ຖ້າຈະຟັງແຕ່ຄວາມເວົ້າ ແລະການຕັດສິນໃຈຂອງຄົນອື່ນ ບໍ່ຕັດສິນໃຈເດັດດ່ຽວເດັດຂາດ, ບໍ່ແຂງແຮງພໍ ຈະເປັນໂຕຂອງໂຕເອງໄດ້ບໍ? ຂ້ອຍຄິດຢູ່ດົນດຽວ. ສຸດທ້າຍ ການຕັດສິນໃຈກໍຄື "ໄປ" ສ່ວນໜຶ່ງກໍແມ່ນກຳລັງໃຈຈາກແມ່, ພໍ່ເຖົ້າ ແລະນ້ອງທັງສີ່ຄົນ.

ເວລາແຫ່ງການສຶກສາຮ່ຳຮຽນ ການດຳລົງຊີວິດ ມີທັງຄວາມ

ສຸກ ແລະທຸກປົນເປກັນໄປ ອາຫານການກິນ ຕົ້ນຕໍແມ່ນຜັດກາດ, ຜັກບົ້ງ, ປາທູ, ຕ່ອນນ້ຳມັນໝູ... ບ່ອນຢູ່ສະດວກສະບາຍ ແຕ່ມີບາງຢ່າງຂາດໆ ເຂີນໆ ບາງຄັ້ງຄຶດທໍ້ຖອຍແຕ່ຕ້ອງສູ້ ຄຶດວ່າແມ່ນເລື່ອງທຳມະດາຂອງຊີວິດນັກສຶກສາໄກບ້ານ ອາໄສຫໍພັກຢູ່ຕາງເຮືອນ, ອາໄສໝູ່ເພື່ອນຜູ້ຮັກແພງເບິ່ງແຍງຍາມເຈັບໄຂ້ ແລະອອຍໃຈໃນເວລາເຫງົາ ທີ່ສຳຄັນລົງເຮືອແລ້ວຕ້ອງຂ້າມໄປໃຫ້ເຖິງຝັ່ງ ໃຫ້ເຖິງຈຸດໝາຍປາຍທາງ.

ຂ້ອຍພະຍາຍາມນຳຫາຄວາມຝັນ, ສ້າງຄວາມຝັນໃຫ້ກາຍເປັນຄວາມຈິງ ຢາກຊ່ອຍເຫຼືອຄອບຄົວ, ນ້ອງໆທີ່ກຳລັງຮຽນ, ຢາກໃຫ້ແມ່ພູມໃຈກັບລູກສາວຄົນນີ້ ເຖິງບໍ່ລາບລວຍເໝືອນຄົນອື່ນ ແຕ່ສາມາດສ້າງຕົນເອງ ສິ່ງສຳຄັນ ສຸຂະພາບຂອງຈິດໃຈ ແລະຄວາມອົບອຸ່ນຈາກແມ່, ພໍ່ເຖົ້າ,ນ້ອງໆ ແລະທຸກຄົນທີ່ໃຫ້ຄວາມຫ່ວງໃຍ ເງິນຄຳເປັນພຽງສິ່ງຂອງນອກກາຍ ສ້າງໃຫ້ຄົນເຮົາມີຄວາມສຸກໄດ້ ແຕ່ຖ້າຫາກຈິດໃຈບໍ່ສະຫງົບສຸກແລ້ວ ມີເງິນກໍບໍ່ມີຄວາມໝາຍ.

ໄລຍະເວລາຮຽນຢູ່ສ້າງຄູອະນຸບານ ສິ່ງທີ່ຂ້ອຍເຮັດໄດ້ດີ, ມີຄວາມໝັ້ນໃຈຄືວິຊາຟ້ອນ ຮອດເດືອນ 2-4/2001 ແມ່ນໄລຍະຂອງການລົງຝຶກຫັດວິຊາຊີບ ຂ້ອຍລົງເຝິກສອນຢູ່ ໂຮງຮຽນອະນຸບານໄຟຟ້າລາວ ບ້ານທົ່ງກາງ ເມືອງສີສັດຕະນາກ ກຳແພງນະຄອນວຽງຈັນ. ໃກ້ຈະສິ້ນສຸດການເຝິກຫັດ ຂ້ອຍໄດ້ຮັບການຍ້ອງຍໍດີເດັ່ນຮອບດ້ານປະເພດທີ 1 ຂອງນັກຮຽນເຝິກຫັດ ແລະມື້ສິ້ນສຸດປີຮຽນ ຂ້ອຍໄດ້ຮັບໃບຍ້ອງຍໍດີເດັ່ນປະເພດທີ 1 ຈາກຜູ້ອຳນວຍການ ນີ້ແມ່ນສິ່ງໜຶ່ງທີ່ສ້າງຄວາມປະທັບໃຈ, ຄວາມພູມໃຈໃຫ້ຂ້ອຍຈົນເກີດມີແນວຄຶດ ຢາກເດີນ

ໜ້າຕໍ່ໄປ ເພື່ອນຳຫາຄວາມຝັນ.

ຫຼັງຈາກຮຽນຈົບ ທາງໂຮງຮຽນປະກາດຮັບສະໝັກເອົາຄູສອນໂຮງຮຽນສ້າງຄູຈຳນວນ 11 ຄົນ ໃນນັ້ນ 7 ຄົນຈະສົ່ງໄປສອນຢູ່ໂຮງຮຽນສ້າງຄູຫຼວງນ້ຳທາ ແລະສາລະວັນ ເຊິ່ງຈະເລີ່ມໄຂຮຽນ ໃນສົກ 2002-2003 ນີ້, ຂ້ອຍນອນຄຶດຫຼາຍມື້ ເຖິງອະນາຄົດຂອງຕົນເອງ ຖ້າກັບເມືອບ້ານແລ້ວຢ້ານວ່າ ບໍ່ມີບ່ອນເຮັດວຽກ.

"ເຮົາຕ້ອງສະໝັກໄປສອນ ບາງທີຄວາມຝັນກັບອະນາຄົດຂອງເຮົາມັນຄົງຫຍັບໃກ້ເຂົ້າຫາເຮົາແລ້ວຕີນີ້"

"ເຮົາອາດຈະໄດ້ຮຽນຕໍ່ ໄດ້ຊ່ອຍຄອບຄົວ, ໃຫ້ນ້ອງໆເຂົ້າຮຽນ ມີໜ້າທີ່ວຽກງານອີກ"

ຫຼາຍໆບັນຫາຄົ້ນຄິດ ພິຈາລະນາ ແລະຕັດສິນໃຈສະໝັກໄປສອນ.

ວັນທີ 1 ກັນຍາ 2002 ເລີ່ມເຂົ້າເຮັດວຽກມື້ທຳອິດ ອາຍຸຂ້ອຍໄດ້ 18 ປີ ຂ້ອຍບໍ່ໄດ້ໃສ່ຊຸດນັກຮຽນອີກແລ້ວ ເບິ່ງຄືວ່າເປັນຜູ້ໃຫຍ່ຂຶ້ນກວ່າເກົ່າ. ມີຄວາມຮັບຜິດຊອບສູງຂຶ້ນ ບໍ່ດົນ ອາຈານຜູ້ໜຶ່ງ ມາບອກວ່າ:

"ໃຫ້ພວກນ້ອງເລືອກເອົາວິຊາສອນທີ່ຕົນເອງມີຄວາມສາມາດສອນໄດ້ ແລະຈົດຊື່ມາໃຫ້ ເອື້ອຍແດ່ເດີ"

ໝູ່ແຕ່ລະຄົນເລືອກວິຊາສອນ ທີ່ຕົນມັກໝົດແລ້ວ ເຫຼືອແຕ່ຂ້ອຍ.

"ເອີ້ຍ ! ວອນ ໂຕຈະສອນຫຍັງເນາະ?" ວຽງສະຫວັນຮ້ອງ

ຖາມຂ້ອຍ.

"ເຮົາເລືອກໃຫ້ວອນກໍໄດ້ ເຮົາຮູ້ໂລດວ່າ ວອນຈະເລືອກວິຊາຫຍັງ?" ສຽງຂອງນິກແກ້ວ ແລະສົມປອງ ເພື່ອນສະໜິດຂອງຂ້ອຍຮ້ອງມາໃສ່.

"ເຮົາເລືອກວິຊາຟ້ອນເດີ ! ຂ້ອຍຮ້ອງບອກ ວຽງສະຫວັນຜູ້ບັນທຶກຊື່.

"ແນະ! ແມ່ນຄວາມເຮົາຄຶດເລີຍ ໂຕເໝາະກັບວິຊານີ້" ນິກແກ້ວ ເວົ້າຂຶ້ນ.

ເວລາແຫ່ງການເຝິກສອນໝູນວຽນໄປເລື້ອຍໆ ໜຶ່ງປີ ທີ່ຂ້ອຍມາສອນຢູ່ທີ່ນີ້, ມື້ໜຶ່ງ ອາຈານຫົວໜ້າຫ້ອງການ ເອີ້ນທຸກຄົນຂຶ້ນຫ້ອງການແລະຖາມວ່າ:

"ໃຫ້ພວກນ້ອງເລືອກເອົາວ່າຈະໄປສອນຢູ່ໃສ ໃນສອງໂຮງຮຽນນີ້"

"ນາງວອນເດຈະໄປທາງໃດ ? ຫຼື ຈະສອນຢູ່ນີ້ເລີຍບໍ່?" ອາຈານຫົວໜ້າຫ້ອງການ ເວົ້າຢອກ ພ້ອມທັງຍິ້ມໃສ່.

"ນ້ອງຈະໄປສອນຢູ່ໂຮງຮຽນສ້າງຄູສາລະວັນ" ຂ້ອຍຕອບ.

ສິ່ງທີ່ເຮັດໃຫ້ຂ້ອຍຢາກມາສອນຢູ່ສ້າງຄູສາລະວັນ ກໍແມ່ນຢາກຢູ່ໃກ້ບ້ານ,ໃກ້ແມ່, ພໍ່ເຖົ້າ ແລະນ້ອງໆ. ວັນທີ 21 ສິງຫາ 2002 ຂ້ອຍ ແລະໝູ່ເພື່ອນອີກສາມຄົນເດີນທາງມາຮອດ ໂຮງຮຽນ ສ້າງຄູສາລະວັນ ທາງໂຮງຮຽນໄດ້ໃຫ້ການຕ້ອນຮັບເປັນຢ່າງດີ.

ຂ້ອຍຍຶດເອົາວິຊາຟ້ອນເປັນວິຊາຫຼັກສອນຢູ່ນີ້ປີທີສອງ ທົວ

ໜ້າຫ້ອງການບອກວ່າ:

"ວອນ! ໂຕຖືກໄປຝຶກອົບຮົມວຽກງານສົ່ງເສີມການອ່ານຢູ່ໜອງບົວທອງ ກຳແພງນະຄອນວຽງຈັນ" ຂ້ອຍດີໃຈຫຼາຍ ເພາະຕົນເອງບໍ່ເຄີຍໄປຝຶກອົບຮົມຈັກເທື່ອ.

ເຂົ້າປີທີສາມ ຂ້ອຍເຂົ້າຮ່ວມກອງປະຊຸມວຽກງານສົ່ງເສີມການອ່ານທີ່ແຂວງສະຫວັນນະເຂດອີກ ຈາກນັ້ນກໍໄດ້ເປັນຄູເຝິກວຽກງານນີ້ ເປັນວິທະຍາກອນ ຊ່ວຍໂຄງການສົ່ງເສີມການອ່ານ (ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ຫຼື ALC) ແລະອົງການຣູມທູຣີດ. ວຽກງານທີ່ກຳລັງເຮັດ ປັດຈຸບັນ ສ້າງໃຫ້ຂ້ອຍຮູ້ຄຸນຄ່າຂອງຕົນເອງຫຼາຍຂຶ້ນ ໄດ້ຮັບໃຊ້ສັງຄົມ ຂ້ອຍອາດບໍ່ທັນເຮັດໄດ້ດີ ທີ່ສຸດເທື່ອ ແຕ່ຍັງດີກວ່າບໍ່ໄດ້ລົງມືເຮັດຫຍັງຈັກຢ່າງເລີຍ ເພາະຄຸນຄ່າຂອງຄົນຂຶ້ນຢູ່ກັບການກະທຳຕົວຈິງ ຄ່າຂອງຄົນຢູ່ທີ່ຜົນຂອງງານບໍ່ໄດ້ຢູ່ທີ່ຄຳເວົ້າ.

ທ່ວາງເດືອນ ມັງກອນ ປີ 2005 ຂ້ອຍໄປເປັນວິທະຍາກອນຝຶກອົບຮົມວຽກງານຝຶກຫັດວິຊາຊີບ ໃຫ້ຄູໂຮງຮຽນລ້ຽງເດັກອະນຸບານບ່ອນຈະເອົານັກຮຽນລົງຝຶກຫັດ ທີ່ແຂວງເຊກອງ. ກັບມາຈາກເຊກອງເພື່ອນຮ່ວມງານບອກຂ້ອຍວ່າ:

"ເຮີຍ ! ວອນ ໂຕຖືກໄປຝຶກອົບຮົມຢູ່ ສ.ສ ຫວຽດນາມ 3 ເດືອນ ໄດ໋ຫັ້ນ !"

ຂ້ອຍບໍ່ສົນໃຈກັບຄຳເວົ້າຂອງເຂົາເຈົ້າເລີຍ ແຕ່ຍິ້ມ ແລະດີໃຈເລັກນ້ອຍ ທັງພະຍາຍາມບໍ່ເຊື່ອຄຳເວົ້າຂອງໃຜ ນອກຈາກໄດ້ຍິນດ້ວຍຕົນເອງຈຶ່ງຈະເຊື່ອ.

ຕອນແລງຂອງມື້ລຸນມາ ຜູ້ອຳນວຍການໂຮງຮຽນມາບອກວ່າ:

"ວອນ ! ໃຫ້ນ້ອງຖ່າຍຮູບ ແລະກະກຽມເອກະສານດ່ວນເພື່ອສົ່ງໃຫ້ກະຊວງສຶກສາ ເຮັດບັດຜ່ານແດນ ໄປຝຶກອົບຮົມວຽກງານລ້ຽງເດັກອະນຸບານທີ່ ສ.ສ ຫວຽດນາມ"

ຂ້ອຍຖາມຊ້ຳເພື່ອຄວາມແນ່ໃຈ ເພາະຂ້ອຍຄຶດວ່າ "ຄົງບໍ່ແມ່ນຂ້ອຍດອກທີ່ຈະໄດ້ໄປ"

"ແມ່ນແທ້ບໍ່ ອາຈານ? ດົນປານໃດຈະໄປ ? ທຶນມາຈາກໃສ ແລະໄປກັບໃຜເນາະ?"

ຄຳຖາມຫຼັ່ງອອກມາຈາກມັນສະໝອງຂອງຂ້ອຍ ແຕ່ລະຄຳລ້ວນແຕ່ແຝງຄວາມດີໃຈໄວ້ ສຸດທ້າຍຂ້ອຍກໍໄປຮັບຄຳຕອບຈາກເພິ່ນທຸກຄຳຖາມເລີຍ.

"ປະມານທ້າຍເດືອນກຸມພາ ນີ້ ແມ່ນທຶນຂອງສ້າງຄູດົງຄຳຊ້າງ"

ໂອ ! ຫົວໃຈຂອງຂ້ອຍ ເຕັ້ນຕຶກຕັກ ! ຕຶກຕັກ ! ເປັນຍ້ອນຄວາມພູມໃຈ, ດີໃຈເພາະຄຶດວ່າ ຂ້ອຍແມ່ນຜູ້ໜຶ່ງທີ່ຈະໄດ້ໄປຄັ້ງນີ້ມັນເຮັດໃຫ້ຂ້ອຍມີຄວາມຫວັງຍິ່ງໃຫຍ່ຕໍ່ໜ້າທີ່ວຽກງານ.

ຂ້ອຍຮູ້ດີວ່າ ເປັນເລື່ອງທຳມະດາສຳລັບຄົນອື່ນ ແຕ່ສຳລັບຂ້ອຍສຳຄັນທີ່ສຸດ ໄດ້ທັງ ຄວາມຮູ້, ຄວາມສຸກ ແລະເປັນຄວາມຝັນຄັ້ງທີສອງທີ່ໃກ້ຈະເປັນຈິງ ຂ້ອຍໄດ້ສອນພ້ອມ ຢູ່ໂຮງຮຽນສ້າງຄູ ໄດ້ຄວາມຮູ້ຈາກຕ່າງປະເທດ ນີ້ຄືຄວາມສຸກທີ່ຂ້ອຍຝັນມາຕະຫຼອດສິບແປດປີ ສິ່ງທີ່ຂ້ອຍຄຶດແລະຝັນ ໄດ້ມາຫາຂ້ອຍແລ້ວ ອາດບໍ່ແມ່ນຄວາມສຳເລັດຂັ້ນສູງສຸດ ແຕ່ສຳລັບຂ້ອຍມີຄ່າ ເກີນກວ່າພັນລະນາໄດ້ ເພາະແມ່ນຜົນງານທີ່

ສ້າງມາໄດ້ດ້ວຍຕົວຂອງຂ້ອຍເອງ.

ວັນທີ 20 ກຸມພາ 2005 ເວລາ 8:00 ໂມງ ເປັນມື້ອອກເດີນທາງຈາກສາລະວັນ ໄປເຊໂນ ເພື່ອລໍຖ້າທີມງານທີ່ກຳລັງເດີນທາງອອກຈາກວຽງຈັນ ຂ້ອຍໃຊ້ເວລາພັກລໍຖ້າຢູ່ທີ່ນັ້ນ ໜຶ່ງຄືນ. ຄ່ຳຄືນແຫ່ງການລໍຄອຍກໍ່ຄ່ອຍໆໝົດໄປ. ແສງຕາເວັນຈາກທິດຕາເວັນອອກ ເລີ່ມພຸ່ງແສງອັນແຮງກ້າ ກາຍເປັນອະລຸນວັນໃໝ່. ຂ້ອຍກະກຽມເຄື່ອງຂອງທີ່ມີມາ ລໍຖ້າລົດຂອງທີມງານທີ່ເດີນທາງມາແຕ່ວຽງຈັນ. ເວລາ 11:00 ໂມງ ລົດເມຄັນໃຫຍ່ມາຈອດຢູ່ຕໍ່ໜ້າຄິວລົດ ບໍ່ພໍເທົ່າໃດນາທີ ຂ້ອຍໄດ້ຍິນສຽງຮ້ອງຂອງຜູ້ຍິງອອກມາຈາກລົດເມຄັນນັ້ນ:

"ເຮີຍ ! ສະບາຍດີສາວສາລະວັນ ມາລໍຖ້າດົນແລ້ວຫວະ? ແມ່ນສຽງນາງພອນ ເພື່ອນສະໜິດຂ້ອຍແຕ່ຄາວຮຽນສ້າງຄູດັງຄຳຊ້າງ.

"ເຮົາມາຮອດແຕ່ວານນີ້ພຸ້ນນ່າ" ຂ້ອຍຕອບ.

ຂ້ອຍຂົນເຄື່ອງຂຶ້ນລົດທັນທີເມື່ອລົດຈອດ ໄດ້ພົບ ຄູ, ອາຈານແລະໝູ່ຄູຫຼາຍໆຄົນ ທີ່ຈາກກັນໄປດົນນານ. ວັນເວລາໝຸນວຽນປ່ຽນໄປເຮັດໃຫ້ຂ້ອຍໄດ້ພົບພໍ້ໝູ່ເພື່ອນ ໄດ້ໃຫ້ຄວາມຮັກ, ຄວາມສຳພັນກັນອີກຄັ້ງ ໃນໄລຍະເວລາສາມເດືອນ. ເມື່ອຂົນເຄື່ອງຂຶ້ນລົດເປັນທີ່ຮຽບຮ້ອຍແລ້ວ ລົດເລີ່ມເຄື່ອນຍ້າຍຈາກເຊໂນ ເຂົ້າສູ່ຊາຍແດນ ລາວ-ຫວຽດນາມ.

ເດີນທາງເປັນເວລາ ສອງມື້ ກັບ ໜຶ່ງຄືນ ກໍຮອດຈຸດທີ່ໝາຍວິທະຍາໄລຄູ ເລກ 2 ສູນກາງເມືອງນາຈາງ ແຂວງແທັງຮວາ ໂຮງຮຽນໄດ້ໃຫ້ການຕ້ອນຮັບ, ໃຫ້ຄວາມສະດວກແກ່ນັກສຶກສາລາວ ມີຫ້ອງພັກ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ